## ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກເຂືອຫຳມ້າ

(ສະບັບທົດລອງ)



ຂຽນໂດຍ: ທ່ານ ຄຳໝັ້ນ ລັກຊີວີ

ຂໍ້ມູນຈາກ: ບ້ານ ໜອງແຊງ ເມືອງ ໄຊຍະບູລີ ແຂວງ ໄຊຍະບູລີ

ປີ 2007

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກໝາກເຂືອຫຳມ້າ

ຮິບໂຮມ ແລະ ຈັດໜ້າໂດຍ: ນ. ຄຳວອງ ແພງທິຈັກ
ແຕ້ມໂດຍ: ທ້າວ ຄຳຫຼ້າ ພອນມະນີວົງ
ຮຽບຮຽງໂດຍ: ອຈ ໂພໄຊ ຈັນທະວົງສາ
ອຈ ລົ່ງ ແສງດາລາ

PDF created with pdfFactory Pro trial version www.pdffactory.com

## ຄຳນຳ

ປື້ມຄວາມຮູ້ພູມປັນຍາທ້ອ້ງຖິ່ນເຫຼັ້ມນີ້ໄດ້ບັນຈຸເອົາເນື້ອໃນ, ຂັ້ນຕອນການປະຕິບັດຕ່າງໆ ລວມທັງຄຸນປະໂຫຍດຂອງການປູກໝາກເຂືອທ້ອງຖິ່ນບ້ານ.ໜອງແຊງເມືອງໄຊຍະບູລີ. ແຂວງໄຊຍະບູລີ ໂດຍແມ່ນຄູເຝິກຊຸມຊົນ ເປັນຜູ້ໃຫ້ຂໍ້ມູນ ແລະຂຽນດ້ວຍຕົນເອງໂດຍຜ່ານການຮັບຮອງ ແລະຮຽບຮຽງຈາກຫ້ອງການສຶກສາປະຈຳເມືອງ, ພະແນກສຶກສາປະຈຳແຂວງ, ສູນ ອົບຮົມຮ່ວມພັດທະນາ, ກົມພາລະ ແລະສິລະປະສຶກສາ (ກະຊວງສຶກສາທິການ).

ປື້ມເຫຼັ້ມນີ້ຄະນະຈັດທຳມີຈຸດປະສົງແນະນຳ ແລະຈັດທຳຂຶ້ນເພື່ອເປັນຄູ່ມື ແລະເປັນບ່ອນອີງໃຫ້ແກ່ຄູ-ອາຈານໃນການສິດສອນວິຊາພູມປັນຍາທ້ອງຖິ່ນ, ດັ່ງນັ້ນຄູຕ້ອງເລືອກຫົວຂໍ້ທີ່ເໝາະສົມກັບໄວອາຍຸຂອງເດັກໃນແຕ່ລະຂັ້ນຮຽນໂດຍອີງຕາມສະມັດຕະພາບຂອງບົດສອນເຊິ່ງໄດ້ລະບຸໄວ້ໃນ ແຜນການສອນປະຈຳປີ, ປະຈຳເດືອນ ແລະປະຈຳອາທິດ, ເຖິງຢ່າງໃດກໍ ຕາມຄູຕ້ອງໄດ້ເອົາໃສ່ຕື່ມໃນການເອົາຄວາມຮູ້ທ້ອງຖິ່ນເຂົ້າມາສິດສອນເພື່ອເຮັດໃຫ້ເນື້ອໃນຂອງຂະບວນການຮຽນຮູ້ຂອງເດັກນ້ອຍມີຄວາມສົມບູນ ແລະມີຄວາມສອດຄ່ອງກັບຄວາມເປັນຈິງຫຼາຍຂຶ້ນ.

ຄະນະຈັດທຳປື້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ຄິດວ່າເນື້ອໃນຍັງມີຫຼາຍອັນທີ່ຍັງບໍ່ທັນສົມບູນ, ຄົບຖ້ວນ ແລະຂາດຫາຍໄປພວກເຮົາຫວັງຢ່າງຍິ່ງວ່າຄົງຈະໄດ້ຮັບຄຳຕຳນິຕິຊົມຈາກຄູ - ອາຈານຜູ້ທີ່ຊົມໃຊ້ທຸກທ່ານ ພວກເຮົາພ້ອມແລ້ວທີ່ຈະປັບປຸງປື້ມຄວາມຮູ້ພູມປັນຍາທ້ອງຖິ່ນເຫຼັ້ມນີ້ໃຫ້ສົມບູນຂຶ້ນແລະຂໍຂອບໃຈລ່ວງໜ້າກ່ຽວກັບຄຳຕຳນິຕິຊົມຂອງທ່ານທີ່ມີຕໍ່ພວກເຮົາ

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ຮູບແລະປະຫວັດຂອງຜູ້ຂຽນ:



ຊື່: ທ່ານ ຄຳໝັ້ນ   ນາມສະກຸນ: ລັກຊີວີ

ອາຍຸ: 62 ປີ   ອາຊີບ: ຄ້າຂາຍ

## ເຫດຜົນຂອງຜູ້ຂຽນບົດ:

ເພື່ອຢາກໃຫ້ຄົນເຮົາທຸກມື້ນີ້ໄດ້ພໍຢູ່ພໍກິນຕ້ອງມີຄວາມດຸໝັ່ນ ອອກເຫື່ອແຮງປູກຝັງລ້ຽງສັດເພື່ອຂາຍເປັນສິນຄ້າເພື່ອມາລ້ຽງຊີບ ຂອງຄົນເຮົາ ແລະ ຢາກໃຫ້ລູກຫຼານນຳໄປສືບທອດຕໍ່ໆໄປ.

## ຄວາມເປັນມາຂອງການປູກໝາກເຂືອ

ໝາກເຂືອເປັນອາຫານຊະນິດໜຶ່ງ ທີ່ພວກເຮົາໄດ້ໃຊ້ມາເປັນອາຫານປະຈຳວັນ ແຕ່ການປູກໝາກເຂືອເປັນວິທີທີ່ງ່າຍດາຍສຳລັບເຮົາ ໂດຍເປັນວຽກປູກຝັງແບບພື້ນບ້ານມາແຕ່ບູຮານນະການທີ່ສືບທອດກັນມາເຖິງປະຈຸບັນ.



PDF created with pdfFactory Pro trial version www.pdffactory.com

## ອຸປະກອນຂອງການປູກໝາກເຂືອ

- ຈົກ ແລະ ສຽມ



- ເບ້ຍໝາກເຂືອ



## ບົດເລກໂຈດ:

ປ້າຄຳໝັ້ນບ້ານໜອງແຊງໄດ້ເກັບໝາກເຂືອມາແຕ່ສວນມີຈຳນວນ 15 ມັດແລ້ວລາວເອົາໄປໃຫ້ອ້າຍຂອງລາວ 5 ມັດ ຖາມວ່າໝາກເຂືອຍັງເຫຼືອຈັກມັດ?

ຕອບ: ມີໝາກເຂືອຈຳນວນ 15 ມັດ

ເອົາໄປໃຫ້ອ້າຍຂອງລາວ 5 ມັດ

ໝາກເຂືອຈະຍັງເຫຼືອເທົ່ານີ້ມັດ

15 ມັດ - 5 ມັດ = 10 ມັດ

## ນິທານ: ມີສອງສ່ຽວ

ມື້ນີ້ໜຶ່ງສອງສ່ຽວໄດ້ລົມກັນວ່າ:ເປັນຫຍັງເຮົານີ້ຈັ່ງແມ່ນມາທຸກຍາກແທ້! ຄັນຊັ້ນພວກເຮົາພາກັນມາລ້ຽງສັດ ແລະ ປູກຝັງເທາະເອີ ເຫັນດີແລ້ວສ່ຽວຄົນໜຶ່ງເວົ້າວ່າ: ຂ້ອຍຊິລ້ຽງແບ້

ສ່ຽວຄົນທີ່ສອງເວົ້າວ່າ: ໂອຄັນຊັ້ນຂ້ອຍຊິປູກໝາກເຂືອແລ້ວສ່ຽວຄົນໜຶ່ງຊ້ຳວ່າ: ຄັນຊັ້ນແບ້ຊິບໍ່ມາຫຼັກກິນໝາກເຂືອສວນຂ້ອຍບໍ?

ນິທານເລື່ອງນີ້ເຮົາຈະເຮັດສິ່ງໃດໜຶ່ງລົງໄປຕ້ອງມີນ້ຳໃຈຮັບຜິດຊອບຈາກນັ້ນທັງສອງຈຶ່ງພາກັນຖຽງກັນຈົນມີນາຍບ້ານມາພົບ.ເມື່ອຖາມກົກປາຍສາຍເຫດແລ້ວຈຶ່ງຮູ້ວ່າທັງສອງບໍ່ໄດ້ປູກຫຍັງເລີຍແຕ່ຜິດກັນກ່ອນຈຶ່ງໄດ້ບອກໃຫ້ທັງສອງ ເລີ່ມເຮັດກ່ອນຜູ້ເຮັດສວນຕ້ອງລ້ອມຮົ້ວຜູ້ລ້ຽງແບ້ໃຫ້ມັດໃຫ້ຜູກ

PDF created with pdfFactory Pro trial version www.pdffactory.com

## ເພງ: ໄດ້ເກັບໄປຂາຍ

ຢູ່ບ້ານຂອງເຮົາ ມີສວນໝາກເຂືອ
ສຸກໃຈເຫຼືອ ເມື່ອໄດ້ກິນປີ່ນ
ກິນກັບຕຳສົ້ມ ເອົາໝາກເຂືອປີ້ນ
ຈັ່ງແມ່ນແຊບ ເອົາແທ້ເອົາວ່າ (x2)

## ລຳລ່ອງ: ເລື່ອງປູກໝາກເຂືອ

ມື້ນີ້ ຂ້ອຍຈະຂໍກ່າວເວົ້າ ເລື່ອງການປູກໝາກເຂືອ
ໃນນັ້ນ ເຂືອໄດ້ກຽມ ອຸປະກອນເຄື່ອງໃຊ້
ຢູ່ໃນນັ້ນ ມີພ້າຈົກສຽມ
ມີບົວຫົດນ້ຳ ໃຫ້ດິນປູກເຂືອສິດຊື່ນ
ຂັ້ນຕອນຕົ້ນ ເສຍຫຍ້າກ້າເບ້ຍ
ແລ້ວຕໍ່ມາ ຂຸດຂຸມປູກເບ້ຍ
ຫົດນ້ຳແລ້ວ ຕົ້ນໃຫຍ່ກ້າຫານ
ດອກຂອງມັນຫຼາຍ ເປັນໝາກດົກໜາແລ້ວ
ໂອ ພໍແຕ່ມາເຖິງນີ້ ເຮົາກໍເກັບໝາກເຂືອ
ມາໃຫ້ລູກແລະເມຍ ເພື່ອໄປຂາຍຕະຫຼາດ
ບໍ່ໄດ້ຂາດ ທຸກເຊົ້າແລະແລງ ທ່ານເອີຍ

- ຄຸຕັກນ້ຳ



- ບົວຫົດນ້ຳ



- ຝຸ່ນຄອກ



PDF created with pdfFactory Pro trial version www.pdffactory.com

## ການກະກຽມດິນ

- ເສຍຫຍ້າບ່ອນທີ່ເຮົາຈະປູກໃຫ້ລະອຽດ



- ຂຸດຂຸມໄລຍະຫ່າງຂອງຂຸມ 50X50 ຊັງຕີແມັດ ລວງກວ້າງຂອງຂຸມ 10X10 ຊັງຕີແມັດ ຄວາມເລິກຂອງຂຸມ 10 ຊັງຕີແມັດ



### ກາບ: ປູກໝາກເຂືອ

ສອນໝາກເຂືອ ຕັ້ງຢູ່ແຄມນ້ຳ
ຂ້ອຍພັດຄ້ຳ ແກ່ປວງປະຊາ
ຕື່ນເຊົ້າມາ ຂ້ອຍໄປບໍ່ຂາດ
ຂ້ອຍສະຫຼາດ ເຮັດໄວ້ຫຼາຍໆ
ເພື່ອເຮັດຂາຍ ຕາມທ້ອງຕະຫຼາດ
ເງິນບໍ່ຂາດ ພາຍໃນຄອບຄົວ
ຢ່າເມົາມົວ ແກ່ຄວາມຫຼິກເວັ້ນ
ຕ້ອງວິ່ງເຕັ້ນ ສ້າງເສດຖະກິດ

### ເຊີ້ງ: ສີຂຽວສີຂາວ

ໂຮ..... ຮິວ.....(x3)
ຟັງເດີພວກເຈົ້າ ພໍ່ແມ່ປະຊາ
ຈະພັນລະນາ ການປູກໝາກເຂືອ
ປູກໃຫ້ມັນເຫຼືອ ທັງກິນທັງໃຊ້
ປູກເຂືອໃຫ້ໄດ້ ໄປຂາຍຕະຫຼາດ
ຂາຍເຂືອບໍ່ຂາດ ມີຫຼາຍຊະນິດ
ມັນບໍ່ເປັນພິດ ໜ່ວຍໃຫຍ່ໜ່ວຍຍາວ
ສີຂຽວສີຂາວ ສີກ່ຳສີແຫຼ້
ກິນຄັກແທ້ໆ ທັງແຊບທັງນົວ
ບໍ່ໄດ້ຢ້ານກົວ ຕໍ່ການອິດເມື່ອຍ
ປູກໄປເລື້ອຍໆ ຂາຍອອກທຸກວັນ

PDF created with pdfFactory Pro trial version www.pdffactory.com

## ຄຸນປະໂຫຍດຂອງການປູກໝາກເຂືອ

- ປູກໝາກເຂືອເປັນຈຳນວນຫຼາຍຂາຍນຳລາຍໄດ້ມາສູ່ຄອບຄົວ
- ໃຊ້ປຸງແຕ່ງອາຫານໃນຊີວິດປະຈຳວັນ
- ປູກເອງ
- ເປັນການຫຼຸດຜ່ອນລາຍຈ່າຍລົງ

## ຂັ້ນຕອນໃນການປູກ(ລະດູແລ້ງ)

- ຫົດນ້ຳໃສ່ຂຸມໃຫ້ຊຸ່ມດີ



- ເອົາເບ້ຍໝາກເຂືອລົງປູກໃສ່ 1-2 ເບ້ຍຕໍ່ຂຸມ



PDF created with pdfFactory Pro trial version www.pdffactory.com

- ເອົາຝຸ່ນຄອກຖອກໃສ່ທົດນໍ້າເຊົ້າ ແລະ ແລງ



## ຫຼັກການທີ່ສໍາຄັນ:

ການປູກໝາກເຂືອແມ່ນຕ້ອງເສຍຫຍ້າ, ຂ້າແມງໄມ້ ແລະ ທົດນໍ້າເປັນປະຈໍາເພື່ອໃຫ້ງອກງາມດີ

## ຜົນໄດ້ຮັບ

ເປັນອາຫານ, ຂາຍສາມາດສ້າງລາຍຮັບໃຫ້ແກ່ຄອບຄົວ

## ລັກສະນະ ແລະ ຊະນິດຂອງໝາກເຂືອ

ໝາກເຂືອມີລັກສະນະແຕກຕ່າງກັນ, ແມ່ນຂຶ້ນກັບແນວພັນຂອງຊະນິດໝາກເຂືອ, ໝາກເຂືອບາງຊະນິດເປັນໜ່ວຍມົນ ແລະ ບາງຊະນິດເປັນໜ່ວຍຍາວສ່ວນສີຂອງໝາກເຂືອບາງຊະນິດມີສີຂາວແກມຂຽວ ແລະ ບາງຊະນິດມີສີມ້ວງ

## ແນວພັນທີນໍາເອົາມາກ້າແກ່ນ

ຕົ້ນໝາກເຂືອແມ່ນກ້າດ້ວຍແກ່ນ, ການເລືອກແນວພັນທີ່ເອົາມາກ້າແກ່ນຄວນເລືອກເອົາໝາກເຂືອທີ່ມີລັກສະນະໜ່ວຍໃຫຍ່ສົມບູນແກ່ ແລະ ສຸກດີ, ຂວດເອົາແກ່ນອອກຕາກແດດເພື່ອກຽມເອົາໄປກ້າ

## ວິທີກິນໝາກເຂືອຖືກຕາມຫຼັກອານາໄມ

ໝາກເຂືອພວກເຮົາສາມາດກິນເປັນອາຫານປະຈໍາວັນ, ເຊິ່ງສາມາດກິນເປັນກັບກ້ອຍ, ກັບແຈ່ວ, ລາບ ແລະ ອື່ນໆໄດ້ ຫຼື ວ່າຈະມາປຸງແຕ່ງເປັນອາຫານຊະນິດອື່ນໆໄດ້ເຊັ່ນ: ປົ່ນປາ, ຂົ້ວ, ປະສົມກັບລາບປາ, ລາບຊີ້ນ ແລະ ອາຫານຊະນິດອື່ນໆ, ພ້ອມທັງສາມາດນໍາມາດອງເພື່ອເກັບຮັກສາໄວ້ກິນດົນໄດ້, ແຕ່ກ່ອນອື່ນກ່ອນຈະນໍາເອົາໝາກເຂືອມາກິນ ຫຼື ມາປຸງແຕ່ງອາຫານຄວນລ້າງນໍ້າໃຫ້ສະອາດເພື່ອໃຫ້ສຸກສຸຂະອະນາໄມເສຍກ່ອນ

PDF created with pdfFactory Pro trial version www.pdffactory.com